ແຜນງານບີຄວາ
ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ
ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ

# BEQUAL Phase 2

## Basic Education Quality and Access in Lao PDR






## Ministry of Education and Sports of Lao PDR and Australia collaborate to enhance continuing professional development opportunities for teachers

## Media Report

**04 - 17 June 2025**

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສໍາລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ
ຄຸ້ມຄອງໂດຍບໍລິສັດເທດທຣາເທັກ ຕາງໜ້າໃຫ້ລັດຖະບານອົດສະຕຣາລີ
Basic Education Quality and Access in Lao PDR is managed by Tetra Tech International Development on behalf of the Australian Government.

## Summary table of all releases

| Date | Media Type | Media Name | Details |
|---|---|---|---|
| 2025-06-05 | Newspaper | Vientiane Times | Front and Page 2 |
| 2025-06-05 | Newspaper | Vientiane Mai | Front and Page 7 |
| 2025-06-05 | Newspaper | Public Security | Page 11 |
| 2025-06-06 | Newspaper | Pathedlao | Front and Page 2 |
| 2025-06-06 | Newspaper | Pasaxon | Page 9 |
| 2025-06-04 | Social media | Economic and Commerce Facebook | 607K Followers |
| 2025-06-04 | Social media | Vientiane Mai Facebook | 4.8K Followers |
| 2025-06-04 | Social media | Army Radio FM 99.7 Facebook | 27K Followers |
| 2025-06-04 | Social media | Pasaxon Facebook | 30K Followers |
| 2025-06-04 | Social media | Lao Security News Facebook | 146K Followers |
| 2025-06-05 | Social media | Pathedlao Facebook | 389K Followers |
| 2025-06-05 | Social media | Vientiane Times Facebook | 78K Followers |
| 2025-06-06 | Social media | VTE 9 Facebook | 622K Followers |
| 2025-06-06 | Social media | Lao People’s Army News Facebook | 137K Followers |
| 2025-06-06 | Social media | Edu-Sport TV Online Facebook | 73K Followers |
| 2025-06-06 | Social media | Lao ESTV Youtube | 1.76 Subscribers |
| 2025-06-08 | Social media | Lao Star TV Facebook | 984K Followers |
| 2025-06-09 | Social media | Edu-Sport Daily News Facebook | 12K Followers |
| 2025-06-16 | Social media | Lao National Television-Englsih Program Facebook | 65K Followers |
| 2025-06-17 | Social media | Lao PSTV Facebook | 250K Followers |
| 2025-06-17 | Social media | Information Media Centre Facebook | 11K Followers |
| 2025-06-04 | Website | Laoedaily.com | Read article in Lao here |
| 2025-06-04 | Website | KPL English | Read article in English here |
| 2025-06-05 | Website | Vientiane Times | |
| 2025-06-06 | Website | KPL Lao | Read article in Lao here |
| 2025-06-06 | Website | BEQUAL | Read article in English here |
| 2025-06-05 | Radio | Army Radio FM 99.7 | |
| 2025-06-05 | Radio | Public Security Radio FM 101.5 | |
| 2025-06-05 | Radio | Lao Youth FM 90.00 MHZ | |
| 2025-06-05 | Radio | Lao National Radio FM 103.7 | |
| 2025-06-05 | Radio | Vientiane Radio FM 105.5 | |
| 2025-06-07 | Radio | Education news FM 103.7 MHZ | |
| 2025-06-06 | TV | VTE 9 | Watch TV news here |
| 2025-06-06 | TV | Lao ESTV | Watch TV news here |

| | | | |
|---|---|---|---|
| 2025-06-08 | TV | Lao Star TV | Watch TV news here |
| 2025-06-16 | TV | Lao National Television-Englsih Program | Watch English TV news here |
| 2025-06-17 | TV | Lao PSTV | Watch English TV news here |
| 2025-06-09 | WhatsApp | MT-PT WhatsApp and FB groups | 19 groups with trainers<br>+/- 713 members |
| 2025-06-09 | WhatsApp | PESS-DESB | 18 Provincial groups<br>426 members |
| 2025-06-09 | WhatsApp | Pre-Service Writing team | 8 TTCs and 2 universities<br>73 members |
| 2025-06-09 | WhatsApp | Target DESB | Teacher Dev Units in 30 target districts<br>64 members |
| 2025-06-09 | WhatsApp | Target TTC | Key coordinators from the 3 target TTCs 17 members |
| 2025-06-09 | WhatsApp | IPS | in targeted provinces-LNT, XKH, SVK- 8 Districts in XKH, 12 Districts |
| 2025-06-09 | WhatsApp | Teaching Standard Review group | MT-PT- 28 members |

| | | | |
|---|---|---|---|
| **2025-06-05** | **Newspaper** | **Public Security** | **Page 11** |

ວັນພະຫັດ 5 ມິຖຸນາ 2025

## ສສກ ແລະ ລັດຖະບານອົດສະຕຣາລີ...



ຮອງລັດຖະມົນຕີກະຊວງ ສສກ, ມີວິທະຍາໄລຄູ 3 ແຫ່ງ ( ຫຼວງນໍ້າທາ, ຄັງໄຂ ແລະ ສະຫວັນນະເຂດ) ບັນດາກົມທີ່ກ່ຽວຂ້ອງຂອງ ສສກ ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາເມືອງ ພ້ອມທັງຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານທີ່ກ່ຽວຂ້ອງເຂົ້າຮ່ວມໃນຮູບແບບເຊິ່ງໜ້າ ແລະ ອອນລາຍ.

ທ່ານ ປອ ນາງ ດາລາວອນ ກິດຕິພັນ ກ່າວວ່າ: ເພື່ອສົ່ງເສີມຄຸນນະພາບການສຶກສາກອງປະຊຸມຄັ້ງນີ້ມີຄວາມສໍາຄັນໃນການຊຸກຍູ້ຄວາມພະຍາຍາມຂອງພວກເຮົາເພື່ອປັບປຸງຄຸນນະພາບການຮຽນ-ການສອນ ພ້ອມຂອບໃຈມາຍັງລັດຖະບານ ແລະ ປະຊາຊົນອົດສະຕຣາລີ ທີ່ໃຫ້ການສະໜັບສະໜູນໃນການປັບປຸງຄຸນນະພາບການສອນເປັນເວລາຍາວນານ ພ້ອມທັງສົ່ງເສີມການສຶກສາເພື່ອຮັບປະກັນວ່າທຸກຄົນສາມາດເຂົ້າເຖິງໂອກາດໃນການຮຽນຮູ້ຢ່າງເທົ່າທຽມກັນ.

ຫຼາຍປີຜ່ານມາ ສສກ ກົມສ້າງຄູ ໄດ້ມີຄວາມກ້າວໜ້າທີ່ໂດດເດັ່ນໃນການສ້າງ ແລະ ປະຕິບັດລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນໂຮງຮຽນ ກອງປະຊຸມຄັ້ງນີ້ ຈະໄດ້ຮັບຟັງຄໍາຄິດເຫັນ ເພື່ອປັບປຸງຄໍາແນະນໍາໃຫ້ເໝາະສົມກັບຈຸດປະສົງຜ່ານມາ ສສກ ໄດ້ມີນິຕິກໍາທີ່ກ່ຽວຂ້ອງກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງຫຼາຍສະບັບ ເຊິ່ງໄລຍະ 2 ວັນຂອງກອງປະຊຸມ ຈະເຮັດວຽກຮ່ວມກັນເພື່ອທົບທວນຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອໃຫ້ມີຄວາມເປັນເອກະພາບໃນການປັບປຸງໃຫ້ສົມບູນຂຶ້ນ ສົ່ງເສີມຄຸນນະ ພາບການສອນ ແລະ ຝຶກອົບຮົມຄູ ແລະ ໄດ້ຮັບການຈັດຕັ້ງປະຕິບັດ.

ຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງສະບັບປັບປຸງແມ່ນໝາກຜົນການຮ່ວມມືຂອງບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງ ຈະເປັນເອກະສານສະບັບສົມບູນ ເພື່ອຂໍອະນຸມັດ ແລະ ນໍາໃຊ້ໃນຂອບເຂດທົ່ວປະເທດພາຍໃນເດືອນທັນວາ 2025 ເປັນເອກະສານທີ່ຈະໃຫ້ຂໍ້ມູນແກ່ບັນດາພາກສ່ວນທີ່ມີຄວາມກ່ຽວຂ້ອງໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໄດ້ມີຂໍ້ມູນທີ່ສໍາຄັນ ແລະ ມີຄໍາແນະນໍາທີ່ເຂົາເຈົ້າຕ້ອງການເພື່ອການຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດ.

| | | | |
|---|---|---|---|
| **2025-06-06** | **Newspaper** | **Pathedlao** | **Front and Page 2** |

# ທາລືຮ່າງຄໍາແນະນໍາການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງສໍາລັບຄູສອນປະຖົມ

ຂປລ. ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງສໍາລັບຄູສອນຊັ້ນປະຖົມສຶກສາ ແບບເຊິ່ງໜ້າ ແລະ ແບບອອນລາຍ ເພື່ອທົບທວນຄືນ ແລະ ປັບປຸງຄໍາແນະນໍາດັ່ງກ່າວ ແລະ ເພື່ອຮັບປະກັນໃຫ້ການພັດທະນາວິຊາຊີບມີຄວາມເຂັ້ມແຂງ ເພື່ອຄູທຸກຄົນໃນທົ່ວປະເທດໃນລະຫວ່າງວັນທີ 3-4 ມິຖຸນາ 2025 ທີ່ນະຄອນຫຼວງວຽງຈັນ ໂດຍມີທ່ານ ນາງ ດາລາວອນ ກິດຕິພັນ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ພ້ອມດ້ວຍຄູຈາກວິທະຍາໄລຄູທົ່ວປະເທດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ດາລາວອນ ກິດຕິພັນ ໄດ້ໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້, ມີຄວາມສໍາຄັນໃນການຊຸກຍູ້ຄວາມພະຍາຍາມຂອງພວກເຮົາເພື່ອປັບປຸງຄຸນນະພາບການຮຽນ-ການສອນ. ຄູແມ່ນຫົວໃຈຂອງ

☞ ອ່ານຕໍ່ໜ້າ 2



ຫຼາຍສະບັບ ເຊິ່ງກອງປະຊຸມຄັ້ງນີ້, ບັນດາຜູ້ເຂົ້າຮ່ວມຈະເຮັດວຽກຮ່ວມກັນເພື່ອທົບທວນຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງທີ່ພັດທະນາຂຶ້ນ. ທັງນີ້, ກໍເພື່ອໃຫ້ມີຄວາມເປັນເອກະພາບໃນການປັບປຸງຄໍາແນະນໍາໃຫ້ສົມບູນຂຶ້ນ ເພື່ອສົ່ງເສີມຄຸນນະພາບການສອນ ແລະ ການຝຶກອົບຮົມຄູ.

ກົມສ້າງຄູ ຈະເຮັດວຽກຢ່າງໃກ້ຊິດຮ່ວມກັບແຜນງານບີຄວາ ເພື່ອທົດລອງລະບົບໃໝ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງຢູ່ໃນ 30 ເມືອງເປົ້າໝາຍ ໂດຍມີຈຸດປະສົງເພື່ອສະໜອງການຊ່ວຍເຫຼືອຄູທີ່ເຂັ້ມແຂງ ແລະ ຍືນຍົງໃນຂັ້ນໂຮງຮຽນ, ພ້ອມທັງຈະມີການຕິດຕາມຜົນໄດ້ຮັບ, ສຶກສາຄົ້ນຄວ້າຜົນໄດ້ຮັບ, ຈາກນັ້ນກໍຈະຂະຫຍາຍລະບົບໄປທົ່ວເຂດອື່ນໆໃນທົ່ວປະເທດ ແລະ ກຽມຄວາມພ້ອມເພື່ອການຈັດຕັ້ງປະຕິບັດວຽກດັ່ງກ່າວໃຫ້ປາກົດຜົນເປັນຈິງ.

ທ່ານ ນາງ ອາເນັດຊາ ເຮັນກາທີ ເລຂາເອກອັກຄະລັດຖະທູດອົດສະຕຣາລີ ປະຈໍາ ສປປ ລາວ ໄດ້ກ່າວວ່າ: ຄຸນນະພາບການສອນແມ່ນໝາກຫົວໃຈຂອງລະບົບການສຶກສາທີ່ເຂັ້ມແຂງ, ພວກເຮົາພູມໃຈທີ່ໄດ້ໃຫ້ການສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອເປີດໂອກາດໃຫ້ຄູໄດ້ຮຽນຮູ້ຜ່ານຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ຄໍາແນະນໍາເຫຼົ່ານີ້ ແມ່ນເປັນຄາດໝາຍສໍາລັບການພັດທະນາຄູ. ຂະແໜງການສຶກສາແມ່ນກໍາລັງຜະເຊີນກັບຄວາມທ້າທາຍທີ່ສໍາຄັນຄືການຂາດແຄນຄູສອນ ເຮັດໃຫ້ການພັດທະນາວິຊາຊີບຄູແບບຕໍ່ເນື່ອງມີຄວາມສໍາຄັນກວ່າເກົ່າ. ດ້ວຍການສ້າງຄວາມເຂັ້ມແຂງ ໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ເຊິ່ງຮັບປະກັນວ່າຄູໃນປັດຈຸບັນໄດ້ຮັບການຊ່ວຍເຫຼືອທີ່ເຂົາເຈົ້າຕ້ອງການເພື່ອມີປະສິດທິພາບໃນການສອນໃນຫ້ອງຮຽນ.

ຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງສະບັບປັບປຸງ, ແມ່ນໝາກຜົນການຮ່ວມມືຂອງບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງ, ຈະເປັນເອກະສານສະບັບສົມບູນ ເພື່ອຂໍອະນຸມັດ ແລະ ນໍາໃຊ້ໃນຂອບເຂດທົ່ວປະເທດພາຍໃນເດືອນທັນວາ 2025, ເປັນເອກະສານທີ່ຈະໃຫ້ຂໍ້ມູນແກ່ບັນດາພາກສ່ວນທີ່ມີຄວາມກ່ຽວຂ້ອງໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້ມີຂໍ້ມູນທີ່ສໍາຄັນ ແລະ ມີຄໍາແນະນໍາທີ່ເຂົາເຈົ້າຕ້ອງການເພື່ອການຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດ.

| 2025-06-06 | Newspaper | Pasaxon | Page 9 |
|---|---|---|---|



# ທາລືຮ່າງຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນຊັ້ນປະຖົມ



ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບ ລັດຖະບານອົສຕຣາລີ ຜ່ານແຜນງານບີຄວາໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນຊັ້ນປະຖົມສຶກສາໃນລະຫວ່າງວັນທີ 3-4 ມິຖຸນາ ຜ່ານມານີ້ ທີ່ນະຄອນຫຼວງວຽງຈັນ ແລະ ວິທະຍາໄລຄູ 3 ແຫ່ງ (ຫຼວງນ້ຳທາ, ຄັງໄຂແລະ ສະຫວັນນະເຂດ) ໂດຍການເປັນປະທານຂອງທ່ານນາງ ດາລາວອນ ກິດຕິພັນ ຮອງລັດຖະມົນຕີກະຊວງ ສສກ, ມີທ່ານນາງ ວາເນັດຊາ ເຮັກກາທີ້ ເລຂາເອກສະຖານທູດອົສຕຣາລີປະຈຳສປປລາວ ໂດຍມີ 7 ພະແນກສຶກສາທິການ ແລະ ກິລາແຂວງ, 8 ວິທະຍາໄລຄູ,

ຢ່າງເທົ່າທຽມກັນ.

ຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້ຖືກພັດທະນາຂຶ້ນໂດຍໄດ້ຮັບການ ສະໜັບສະໜູນ ຈາກລັດຖະບານອົສຕຣາລີຜ່ານແຜນງານບີຄວາ ຊຶ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມຂອງ ສສກ ເພື່ອເສີມຂະຫຍາຍການສ້າງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນທົ່ວປະເທດສຳລັບຄູສອນໃນຂັ້ນໂຮງຮຽນ. ຄຳແນະນຳໄດ້ໃຫ້ຂໍ້ມູນເພື່ອຂັບເຄື່ອນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ. ໃນນີ້, ລວມມີພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງແຕ່ລະພາກສ່ວນທີ່ເປັນຜູ້ມີສ່ວນຮ່ວມທີ່ສຳຄັນ.

ໃນໄລຍະຫຼາຍປີຜ່ານມາ,

ຈຸດປະສົງເພື່ອສະໜອງການຊ່ວຍເຫຼືອຄູທີ່ເຂັ້ມແຂງ ແລະ ຍືນຍົງໃນຂັ້ນໂຮງຮຽນ. ພວກເຮົາຈະມີການຕິດຕາມຜົນໄດ້ຮັບ, ສຶກສາຄົ້ນຄວ້າຜົນໄດ້ຮັບ. ຈາກນັ້ນ, ຈະຂະຫຍາຍລະບົບໄປຫາເຂດອື່ນໆໃນທົ່ວປະເທດ.

ໂອກາດນີ້, ກົມສ້າງຄູໄດ້ນຳສະເໜີຜົນໄດ້ຮັບ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດການພັດທະນາວິຊາຊີບຄູແບບຕໍ່ເນື່ອງຢູ່ໃນຂັ້ນໂຮງຮຽນ ມາຮອດປັດຈຸບັນ, ໄດ້ນຳສະເໜີພາບລວມຂອງຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ໂຄງຮ່າງ ແລະ ຈຸດປະສົງຂອງການນຳໃຊ້. ຈາກນັ້ນ, ໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນການສົນທະນາເປັນກຸ່ມ ເພື່ອອອກຄຳຄິດເຫັນກ່ຽວກັບແນວທາງ ແລະ ວິທີການທົດລອງໃນ 30 ເມືອງເປົ້າໝາຍ, ໄດ້ຮັບການແຈ້ງໃຫ້ຊາບກ່ຽວກັບຂັ້ນຕອນການພັດທະນາໃນຂັ້ນຕໍ່ໄປ ແລະ ປັບປຸງຄຳແນະນຳຂັ້ນສຸດທ້າຍ, ລວມທັງການປຶກສາຫາລືແບບກຸ່ມຍ່ອຍກັບຜູ້ມີສ່ວນຮ່ວມໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນແຂວງ

| 2025-06-04 | Economic and Commerce Facebook |
|---|---|

**ຂ່າວເສດຖະກິດ-ການຄ້າ Lao Economic Daily**
3h ·

ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍຮ່ວມມືກັບລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ໄດ້ຈັດ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງສຳລັບຄູສອນຊັ້ນປະຖົມສຶກສາ ທີ່ນະຄອນຫຼວງວຽງຈັນ ແລະ ທີ່ວິທະຍາໄລຄູ 3 ແຫ່ງ (ຫຼວງນ້ຳທາ, ຄັງໄຊ ແລະ ສະຫວັນນະເຂດ) ໃນວັນທີ 3-4 ມິຖຸນາ 2025. ກອງປະຊຸມສຳມະນາ 2 ວັນນີ້ ໄດ້ເຊີນບັນດາພາກສ່ວນທີ່ມີສ່ວນຮ່ວມສຳຄັນໃນຂະແໜງການສຶກສາ ເພື່ອທົບທວນຄືນ ແລະ ປັບປຸງຄຳແນະນຳດັ່ງກ່າວ, ເພື່ອຮັບປະກັນໃຫ້ການພັດທະນາວິຊາຊີບມີຄວາມເຂັ້ມແຂງ ເພື່ອຄູທຸກຄົນໃນທົ່ວປະເທດ.
--------------
ອ່ານຂ່າວລະອຽດທີ່ລິ້ງ: https://laoedaily.com.la/2025/06/04/141611/




You and 8 others · 2 shares
Like · Comment · Share

| 2025-06-04 | Vientiane Mai Facebook |
|---|---|

**ວຽງຈັນໃໝ່/VientianeMai**
5h ·

ສສກ ແລະ ລັດຖະບານສະຕຣາລີ ຜ່ານແຜນງານບີຄວາ ສືບຕໍ່ສົ່ງເສີມໂອກາດໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນຊັ້ນປະຖົມ
..................................................

ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນຊັ້ນປະຖົມສຶກສາ ໂດຍຮ່ວມມືກັບລະຫວ່າງ ກະຊວງສຶກສາທິການ ແລະ ກິລາ (ສສກ) ແລະລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ຈັດຂຶ້ນລະຫວ່າງ ວັນທີ 3-4 ທີ່ນະຄອນຫຼວງວຽງຈັນ ໂດຍມີ ວິທະຍາໄລຄູ 3 ແຫ່ງ (ຫຼວງນ້ຳທາ ຄັງໄຊ ແລະ ສະຫວັນນະເຂດ) ບັນດາກົມທີ່ກ່ຽວຂ້ອງຂອງ ສສກ ພະແນກສຶກສາທິການ ແລະ ກິລາແຂວງ ຫ້ອງການສຶກສາເມືອງ ພ້ອມທັງຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ທີ່ກ່ຽວຂ້ອງ ເຂົ້າຮ່ວມ ໃນຮູບແບບເຊິ່ງໜ້າ ແລະ ອອນລາຍ.

ເປັນກຽດກ່າວເປີດກອງປະຊຸມໃນຄັ້ງນີ້ໂດຍ ທ່ານ ປອ ນາງ ດາລາວອນ ກິດຕິພັນ ຮອງລັດຖະມົນຕີກະຊວງ ສສກ ເຊິ່ງທ່ານໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມຄຸນນະພາບການສຶກສາ ກອງປະຊຸມຄັ້ງນີ້ມີຄວາມສຳຄັນໃນການຊຸກຍູ້ຄວາມພະຍາຍາມຂອງພວກເຮົາເພື່ອປັບປຸງຄຸນນະພາບການຮຽນ-ການສອນ ພ້ອມຂອບໃຈມາຍັງລັດຖະບານ ແລະ ປະຊາຊົນອົດສະ ຕຣາລີ ທີ່ໃຫ້ການສະໜັບສະໜູນໃນການປັບປຸງຄຸນນະພາບການສອນເປັນເວລາຍາວນານ ພ້ອມທັງ ສົ່ງເສີມການສຶກສາຮຽນເພື່ອຮັບປະກັນວ່າທຸກຄົນສາມາດເຂົ້າເຖິງໂອກາດໃນການຮຽນຮູ້ຢ່າງເທົ່າທຽມກັນ.

ຫຼາຍປີຜ່ານມາ ສສກ ກົມສ້າງຄູ ໄດ້ມີຄວາມກ້າວໜ້າທີ່ໂດດເດັ່ນໃນການສ້າງ ແລະ ປະຕິບັດລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນໂຮງຮຽນ ກອງປະຊຸມຄັ້ງນີ້ ຈະໄດ້ຮັບຟັງຄຳຄິດເຫັນ ເພື່ອປັບປຸງຄຳແນະນຳໃຫ້ເໝາະສົມກັບຈຸດປະສົງ ຜ່ານມາ ສສກ ໄດ້ມີນິຕິກຳທີ່ກ່ຽວຂ້ອງກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງຫຼາຍສະບັບ ເຊິ່ງໄລຍະ 2 ວັນຂອງກອງປະຊຸມ ຈະເຮັດວຽກຮ່ວມກັນເພື່ອທົບທວນ ຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອໃຫ້ມີຄວາມເປັນເອກະພາບໃນການປັບປຸງໃຫ້ສົມບູນຂຶ້ນ ສົ່ງເສີມຄຸນນະພາບການສອນ ແລະ ເຜີກອົບຮົມຄູ ແລະ ໄດ້ຮັບການຈັດຕັ້ງປະຕິບັດ.

ໂອກາດດຽວກັນ ທ່ານ ນາງ ວາເນັດສຊ້າ ເຮັກກາທີ້ ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໄດ້ໃຫ້ສຳພາດເຖິງ ການຢືນຢັນອີກຄັ້ງ ເຖິງຄວາມມຸ້ງໝັ້ນຂອງລັດຖະບານອົດສະຕຣາລີ ເພື່ອສະໜັບສະໜູນການພັດທະນາຄູໃນລາວວ່າ: ພ້ອມຍົກໃຫ້ເຫັນຄວາມຮີບດ່ວນຂອງການສ້າງຄວາມເຂັ້ມ ແຂງໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ດ້ວຍການສ້າງຄວາມເຂັ້ມແຂງ ແລະ ຮັບປະກັນ ໄດ້ຮັບການຊ່ວຍເຫຼືອ ໃນການສອນໃນຫ້ອງຮຽນ ແລະ ພ້ອມມຸ່ງໝັ້ນທີ່ຈະລົງທຶນໃນການພັດທະນາຄູ ທີ່ເປັນຍຸດທະສາດທີ່ສຳຄັນເພື່ອພັດທະນາຂະແໜງ ການສຶກສາໃຫ້ມີຄຸນນະພາບໃນລາວ.

ຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສະບັບປັບປຸງ ແມ່ນໝາກຜົນການຮ່ວມມືຂອງບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງ ຈະເປັນເອກະສານສະບັບສົມບູນ ເພື່ອຂໍອະນຸມັດ ແລະ ນຳໃຊ້ໃນຂອບເຂດທົ່ວປະເທດພາຍໃນ ເດືອນທັນວາ 2025 ເປັນເອກະສານທີ່ຈະໃຫ້ຂໍ້ມູນແກ່ບັນດາພາກສ່ວນທີ່ມີຄວາມກ່ຽວຂ້ອງໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໄດ້ມີຂໍ້ມູນທີ່ສຳຄັນ ແລະ ມີຄຳແນະນຳ ທີ່ເຂົາເຈົ້າຕ້ອງການເພື່ອການຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດ.
ວຽງຈັນໃໝ່/VientianeMai
Bounmy Sivilay
@ຜູ້ຕິດຕາມ




You, Tik Chandaraphone and 2 others · 1 share
Like · Comment · Share

| 2025-06-05 | Vientiane Times Facebook |
|---|---|

**Vientiane Times**
Yesterday at 8:58 AM ·

Australia backs teacher training to raise learning quality

The Ministry of Education and Sports is working with Australia to strengthen teacher training so that Lao children can receive better education.
New guidelines for Continuing Professional Development (CPD) will help teachers improve their skills throughout their career, with the aim of raising learning outcomes in classrooms nationwide...
(Continue read) https://www.vientianetimes.org.la/.../Cur_105_Australia...



You and 10 others

Like Comment Share

| 2025-06-06 | VTE 9 Facebook and TV |
|---|---|




ສສກ ແລະ ອົດສະຕຣາລີ ສືບຕໍ່ສົ່ງເສີມການພັດທະນາວິຊາຊີບ ສໍາລັບຄູສອນຊັ້ນປະຖົມສຶກສາ

| 2025-06-06 | Lao People’s Army News Facebook |
| --- | --- |

Lao people's Army News
4h ·

ກະຊວງສຶກສາທິການ ແລະ ກິລາ ສົ່ງເສີມໂອກາດໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

-------------------------------------------

ໃນລະຫວ່າງວັນທີ 3-4 ມິຖຸນາ 2025 ນີ້, ກະຊວງສຶກສາທິການ ແລະ ກິລາ ຮ່ວມມືກັບລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ທີ່ນະຄອນຫຼວງວຽງຈັນ ແລະ ວິທະຍາໄລຄູ 3 ແຫ່ງ (ຫຼວງນ້ຳທາ, ຄັງໄຂ ແລະ ສະຫວັນນະເຂດ), ໂດຍການເປັນປະທານ ຂອງທ່ານ ປອ ນາງ ດາລາວອນ ກິດຕິພັນ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ມີບັນດາຄະນະກົມທີ່ກ່ຽວຂ້ອງ, 7 ພະແນກສຶກສາທິການ ແລະ ກິລາແຂວງ, 8 ວິທະຍາໄລຄູ, 3 ຫ້ອງການສຶກສາທິການ ແລະ ກິລາເມືອງ ພ້ອມທັງມີຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນພິທີ, ທ່ານ ປອ ນາງ ດາລາວອນ ກິດຕິພັນ ໄດ້ກ່າວເປີດກອງປະຊຸມ ເຊິ່ງໄດ້ເນັ້ນໜັກເຖິງຄວາມສຳຄັນ ຂອງການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມຄຸນນະພາບການສຶກສາ ວ່າ: "ກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ມີຄວາມສຳຄັນໃນການຊຸກຍູ້ຄວາມພະຍາຍາມ ເພື່ອປັບປຸງຄຸນນະພາບການຮຽນການສອນ. ຄູແມ່ນຫົວໃຈຂອງການສຶກສາ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ການສອນເປັນບູລິມະສິດອັນດັບຕົ້ນຂອງກະຊວງສຶກສາທິການ ແລະ ກິລາ. ຂໍສະແດງຄວາມຂອບໃຈ ມາຍັງລັດຖະບານ ແລະ ປະຊາຊົນອົດສະຕຣາລີ ທີ່ໄດ້ໃຫ້ການສະໜັບສະໜູນໃນການປັບປຸງຄຸນນະພາບການສອນເປັນເວລາຍາວນານ ພ້ອມທັງ ສົ່ງເສີມການສຶກສາຮຽນ ເພື່ອຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງໂອກາດໃນການຮຽນຮູ້ຢ່າງເທົ່າທຽມກັນ".

ຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້ຖືກພັດທະນາຂຶ້ນ ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ເຊິ່ງເປັນສ່ວນໜຶ່ງ ຂອງຄວາມພະຍາຍາມ ຂອງກະຊວງສຶກສາທິການ ແລະ ກິລາ ເພື່ອເສີມຂະຫຍາຍການສ້າງລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນທົ່ວປະເທດສຳລັບຄູສອນໃນຂັ້ນໂຮງຮຽນ. ຄຳແນະນຳໄດ້ໃຫ້ຂໍ້ມູນເພື່ອຂັບເຄື່ອນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນນີ້, ລວມມີ: ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນທີ່ເປັນຜູ້ມີສ່ວນຮ່ວມທີ່ສຳຄັນ.

ກອງປະຊຸມຄັ້ງນີ້, ໄດ້ປະກອບຄຳຄິດເຫັນ ເພື່ອປັບປຸງຄຳແນະນຳໃຫ້ເໝາະສົມກັບຈຸດປະສົງ, ເພື່ອໃຫ້ການສະໜັບສະໜູນແກ່ຜູ້ທີ່ມີສ່ວນຮ່ວມໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃຫ້ຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນຢ່າງເປັນລະບົບ.

ທ່ານ ປອ ນາງ ດາລາວອນ ກິດຕິພັນ ໄດ້ກ່າວຕື່ມອີກວ່າ: "ກົມສ້າງຄູ ຈະເຮັດວຽກຢ່າງໃກ້ຊິດຮ່ວມກັບແຜນງານບີຄວາ ເພື່ອທົດລອງລະບົບໃໝ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຢູ່ໃນ 30 ເມືອງເປົ້າໝາຍ ໂດຍມີຈຸດປະສົງເພື່ອສະໜອງການຊ່ວຍເຫຼືອຄູທີ່ເຂັ້ມແຂງ ແລະ ຍືນຍົງໃນຂັ້ນໂຮງຮຽນ. ພວກເຮົາຈະມີການຕິດຕາມຜົນໄດ້ຮັບ, ສຶກສາຄົ້ນຄວ້າຜົນໄດ້ຮັບ ຈາກນັ້ນ, ກໍຂະຫຍາຍລະບົບໄປຫາເຂດອື່ນໆ ໃນທົ່ວປະເທດ. ນີ້ເປັນເຫດຜົນທີ່ພວກເຮົາໄດ້ເຊີນຄູ່ຮ່ວມພັດທະນາມາຮ່ວມນຳໃນກອງປະຊຸມນີ້. ພ້ອມທັງ ຮຽກຮ້ອງໃຫ້ທຸກທ່ານຈົ່ງຊ່ວຍກັນ ປະກອບສ່ວນຢ່າງຕັ້ງໜ້າ, ປະກອບຄຳເຫັນດ້ານວິຊາການ ແລະ ກຽມຄວາມພ້ອມເພື່ອການຈັດຕັ້ງປະຕິບັດວຽກດັ່ງກ່າວໃຫ້ປະກົດຜົນເປັນຈິງ".




You, Tik Chandaraphone and 33 others · 2 shares

Like · Comment · Share

| 2025-06-06 | Edu-Sport TV Online Facebook, Youtube and TV |
| --- | --- |




ສສກ-ລັດຖະບານ ອົດສະຕຣາລີ ສົ່ງເສີມໂອກາດ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

ໂທລະພາບສຶກສາ ແລະ ກິລາ LaoESTV Official · 1.76K subscribers · Subscribe

0 · Share · Download · Save

| | |
|---|---|
| **2025-06-09** | **Edu-Sport Daily News Facebook** |




| | |
|---|---|
| **2025-06-16** | **Lao National Television-English Program Facebook and TV** |




| | |
|---|---|
| **2025-06-17** | **Lao PSTV Facebook and TV** |



| 2025-06-17 | Information Media Centre Facebook |
|---|---|

**ສູນໂຄສະນາຂ່າວສານ ການສຶກສາ ແລະ ກິລາ**
10h ·

ກະຊວງສຶກສາທິການ ແລະ ກິລາ ແລະ ລັດຖະບານອົດສະຕຣາລີ ຮ່ວມມືກັນເພື່ອສົ່ງເສີມໂອກາດໃນການພັດທະນາວິຊາຊີບຄູແບບຕໍ່ເນື່ອງສໍາລັບຄູ

ໃນວັນທີ 3-4 ມິຖຸນາ 2025 ທີ່ຜ່ານມາ, ກະຊວງສຶກສາທິການ ແລະ ກິລາ (ສສກ) ໂດຍຮ່ວມມືກັບລັດຖະບານອົດສະຕຣາລີ ຜ່ານແຜນງານບີຄວາ ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງສໍາລັບຄູສອນຊັ້ນປະຖົມສຶກສາ ທີ່ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ປອ ນາງ ດາລາວອນ ກິດຕິພົນ, ຮອງລັດຖະມົນຕີກະຊວງ ສສກ ແລະ ທ່ານ ທ່ານ ນາງ ອາເນັດຊ້າ ເຣັກກາທີ້, ເລຂາເອກ, ສະຖານທູດອົດສະຕຣາລີ ປະຈໍາ ສປປ ລາວ.

ກອງປະຊຸມເຊິ່ງມີຜູ້ເຂົ້າຮ່ວມປະມານ 50 ທ່ານ ເຊິ່ງມາຈາກບັນດາກົມທີ່ກ່ຽວຂ້ອງຂອງ ສສກ, 7 ພະແນກສຶກສາທິການ ແລະ ກິລາແຂວງ, 8 ວິທະຍາໄລຄູ, 3 ຫ້ອງການສຶກສາທິການ ແລະ ກິລາເມືອງ, ພ້ອມທັງມີຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ທີ່ກ່ຽວຂ້ອງ ໄດ້ເນັ້ນໜັກໃຫ້ບັນດາພາກສ່ວນທີ່ມີສ່ວນຮ່ວມສໍາຄັນໃນຂະແໜງການສຶກສາ ທົບທວນຄືນ ແລະ ປັບປຸງຄໍາແນະນໍາດັ່ງກ່າວ, ເພື່ອຮັບປະກັນໃຫ້ການພັດທະນາວິຊາຊີບມີຄວາມເຂັ້ມແຂງ ເພື່ອຄູທຸກຄົນໃນທົ່ວປະເທດ.

ໃນການກ່າວເປີດກອງປະຊຸມ,  ທ່ານ ປອ ນາງ ດາລາວອນ ກິດຕິພົນ ໄດ້ເນັ້ນໜັກເຖິງຄວາມສໍາຄັນຂອງການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອສົ່ງເສີມຄຸນນະພາບການສຶກສາ. ທ່ານກ່າວວ່າ: "ກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ມີຄວາມສໍາຄັນໃນການຊຸກຍູ້ຄວາມພະຍາຍາມຂອງພວກເຮົາເພື່ອປັບປຸງຄຸນນະພາບການຮຽນການສອນ. ຄູແມ່ນຫົວໃຈຂອງການສຶກສາ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ການສອນເປັນບູລິມະສິດອັນດັບຕົ້ນຂອງກະຊວງສຶກສາທິການ ແລະ ກິລາ. ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງຍິ່ງມາຍັງລັດຖະບານ ແລະ ປະຊາຊົນອົດສະຕຣາລີ ທີ່ໄດ້ໃຫ້ການສະໜັບສະໜູນໃນການປັບປຸງຄຸນນະພາບການສອນເປັນເວລາຍາວນານ. ພ້ອມທັງ ສົ່ງເສີມການສຶກສາຮຽນເພື່ອຮັບປະກັນວ່າທຸກຄົນສາມາດເຂົ້າເຖິງໂອກາດໃນການຮຽນຮູ້ຢ່າງເທົ່າທຽມກັນ".

ທ່ານຮອງລັດຖະມົນຕີ ໄດ້ກ່າວອີກວ່າ: "ກົມສ້າງຄູຈະເຮັດວຽກຢ່າງໃກ້ຊິດຮ່ວມກັບແຜນງານບີຄວາ ເພື່ອທົດລອງລະບົບໃໝ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ຢູ່ໃນ 30 ເມືອງເປົ້າໝາຍ, ໂດຍມີຈຸດປະສົງເພື່ອສະໜອງການຊ່ວຍເຫຼືອຄູທີ່ເຂັ້ມແຂງ ແລະ ຍືນຍົງໃນຂັ້ນໂຮງຮຽນ. ພວກເຮົາຈະມີການຕິດຕາມຜົນໄດ້ຮັບ, ສຶກສາຄົ້ນຄວ້າຜົນໄດ້ຮັບ ແລະ ຈາກນັ້ນກໍ່ຂະຫຍາຍລະບົບໄປຫາເຂດອື່ນໆໃນທົ່ວປະເທດ. ນີ້ເປັນເຫດຜົນທີ່ພວກເຮົາໄດ້ເຊີນຄູ່ຮ່ວມພັດທະນາມາຮ່ວມນໍາໃນກອງປະຊຸມນີ້. ຂ້າພະເຈົ້າຂໍຮຽກຮ້ອງໃຫ້ທຸກທ່ານຈົ່ງຊ່ວຍກັນ ປະກອບສ່ວນຢ່າງຕັ້ງໜ້າ, ປະກອບຄໍາເຫັນດ້ານວິຊາການ ແລະ ກຽມຄວາມພ້ອມເພື່ອການຈັດຕັ້ງປະຕິບັດວຽກດັ່ງກ່າວໃຫ້ປາກົດຜົນເປັນຈິງ".

ໃນຂະນະທີ່ ທ່ານ ນາງ ອາເນັດຊ້າ ເຣັກກາທີ້, ເລຂາເອກ ສະຖານທູດອົດສະຕຣາລີ ປະຈໍາ ສປປ ລາວ, ໄດ້ຢືນຢັນອີກຄັ້ງເຖິງຄວາມມຸ້ງໝັ້ນຂອງລັດຖະບານອົດສະຕຣາລີ ເພື່ອສະໜັບສະໜູນການພັດທະນາຄູໃນລາວ. ທ່ານກ່າວວ່າ: "ຄຸນນະພາບການສອນແມ່ນໝາກຫົວໃຈຂອງລະບົບການສຶກສາທີ່ເຂັ້ມແຂງ. ພວກເຮົາພູມໃຈທີ່ໄດ້ໃຫ້ການສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອເປີດໂອກາດໃຫ້ຄູໄດ້ຮຽນຮູ້ຜ່ານ ຄໍາແນະນໍາການພັດທະນາວິຊາຊີບຄູແບບຕໍ່ເນື່ອງ. ຄໍາແນະນໍາເຫຼົ່ານັ້ນ ແມ່ນເປັນຄາດໝາຍສໍາລັບການພັດທະນາຄູ". ທ່ານຍັງໄດ້ຍົກໃຫ້ເຫັນຄວາມຮີບດ່ວນຂອງການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໃນທາມກາງສະພາບການທີ່ທ້າທາຍໃນຂະແໜງການສຶກສາ."

ທ່ານໄດ້ກ່າວຕື່ມວ່າ: "ຂະແໜງການສຶກສາແມ່ນກໍາລັງປະເຊີນກັບຄວາມທ້າທາຍທີ່ສໍາຄັນຄືການຂາດແຄນຄູສອນ, ເຮັດໃຫ້ການພັດທະນາວິຊາຊີບຄູແບບຕໍ່ເນື່ອງມີຄວາມສໍາຄັນກວ່າເກົ່າ. ດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ພວກເຮົາໄດ້ຮັບປະກັນວ່າ ຄູໃນປະຈຸບັນໄດ້ຮັບການຊ່ວຍເຫຼືອທີ່ເຂົາເຈົ້າຕ້ອງການ ເພື່ອມີປະສິດທິພາບໃນການສອນໃນຫ້ອງຮຽນ. ນີ້ແມ່ນເຫດຜົນທີ່ລັດຖະບານອົດສະຕຣາລີ ຍັງຄົງມີຄວາມມຸ່ງໝັ້ນທີ່ຈະລົງທຶນໃນການພັດທະນາຄູ ທີ່ເປັນຍຸດທະສາດທີ່ສໍາຄັນເພື່ອພັດທະນາຂະແໜງການສຶກສາໃຫ້ມີຄຸນນະພາບໃນລາວ".

#ຂໍ້ມູນ ແລະ ພາບຈາກ Bqual









You, Corinne Javary and 4 others — 1 comment 1 share

Like Comment Share

LAO PRESS IN FOREIGN LANGUAGES
Vientiane Times
www.vientianetimes.org.la www.vientianetimes.la

Home About Us Lao-Web Lao-FB Eng-FB VideoClips Previous EPaper Websites Partners Advertise Subscribe Payments Log In



Teachers have access to a range of CPD tools, including development videos and support packs.

## Australia backs teacher training to raise learning quality

The Ministry of Education and Sports is working with Australia to strengthen teacher training so that Lao children can receive better education.

New guidelines for Continuing Professional Development (CPD) will help teachers improve their skills throughout their career, with the aim of raising learning outcomes in classrooms nationwide.

The draft guidelines were reviewed at a two-day workshop held in Vientiane during June 3-4 and by three teacher training colleges.

The ministry, with support from the Australian-funded Basic Education Quality and Access in Laos (BEQUAL) programme, brought together more than 50 participants from across the education sector.

The Deputy Minister of Education and Sports, Dr Daravone Kittiphanh, said the new CPD system will directly benefit students by making teaching more effective and inclusive, especially in disadvantaged areas.

"This consultation workshop on the CPD guidelines plays a vital role in advancing our efforts to improve teaching quality," she said. "Teachers are at the heart of education, and strengthening teaching is a top priority for the Ministry of Education."

The Department of Teacher Education has already begun piloting the CPD system in 30 districts. The final version of the guidelines will be approved and rolled out nationwide by December.

Dr Daravone said the guidelines bring together existing rules and practices into one clear and practical plan. "Our objective is to produce a comprehensive document that supports teaching quality and teacher training," she said. "We will monitor the outcomes, learn from the results, and then expand the system to other areas across the country."

During the workshop, participants discussed how to improve the draft and how the system will work in practice. They also looked at ways to measure progress and gather feedback from schools.

The Australian Embassy's First Secretary, Ms Vanessa Hegarty, said the new guidelines come at a crucial time when Laos is facing teacher shortages.

"The education sector is facing a critical challenge with teacher shortages, making professional development more important than ever," she said.

"By strengthening CPD, we ensure that existing teachers receive the support they need to be effective in the classroom," she added.

The new CPD system is expected to make long-term improvements to teaching in Laos by building a stronger support network, improving school-based training, and ensuring every teacher has access to quality learning opportunities.

By **Times Reporters**
**(Latest Update June 5, 2025)**

| 2025-06-06 | KPL Lao Website |
|---|---|



# ຫາລື ຮ່າງຄຳແນະນຳການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນປະຖົມ

06/06/2025 07:32 Email Print 110 Like Share

**ຂປລ** ຂປລ. ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນຊັ້ນປະຖົມສຶກສາ ແບບເຊິ່ງໜ້າ ແລະ ແບບອອນລາຍ ເພື່ອທົບທວນຄືນ ແລະ ປັບປຸງຄຳແນະນຳດັ່ງກ່າວ ແລະ ເພື່ອຮັບປະກັນໃຫ້ການພັດທະນາ ວິຊາຊີບມີຄວາມເຂັ້ມແຂງ ເພື່ອຄູທຸກຄົນໃນທົ່ວປະເທດ



ຂປລ. ກະຊວງສຶກສາທິການ ແລະ ກິລາ (ສສກ) ຮ່ວມກັບລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງຄຳແນະນຳ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສຳລັບຄູສອນຊັ້ນປະຖົມສຶກສາ ແບບເຊິ່ງໜ້າ ແລະ ແບບອອນລາຍ ເພື່ອທົບທວນຄືນ ແລະ ປັບປຸງຄຳແນະນຳດັ່ງກ່າວ ແລະ ເພື່ອຮັບປະກັນໃຫ້ການພັດທະນາ ວິຊາຊີບມີຄວາມເຂັ້ມແຂງ ເພື່ອຄູທຸກຄົນໃນທົ່ວປະເທດ ໃນລະຫວ່າງວັນທີ 3-4 ມິຖຸນາ 2025 ທີ່ນະຄອນຫລວງວຽງຈັນ ໂດຍມີທ່ານ ນາງ ດາລາວອນ ກິດຕິພັນ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ພ້ອມດ້ວຍ ຄູຈາກວິທະຍາໄລຄູທົ່ວປະເທດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ນາງ ດາລາວອນ ກິດຕິພັນ ໄດ້ໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້, ມີຄວາມສຳຄັນໃນການຊຸກຍູ້ຄວາມພະຍາຍາມຂອງພວກເຮົາ ເພື່ອປັບປຸງຄຸນນະພາບການຮຽນ-ການສອນ. ຄູແມ່ນຫົວໃຈຂອງການສຶກສາ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ການສອນເປັນບຸລິມະສິດອັນດັບຕົ້ນ ຂອງກະຊວງສຶກສາທິການ ແລະ ກິລາ, ຄຳແນະນຳການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງໄດ້ຖືກພັດທະນາຂຶ້ນ ໂດຍໄດ້ຮັບການສະໜັບສະໜູນຈາກ ລັດຖະບານອົດສະຕຣາລີ ໂດຍຜ່ານແຜນງານບີຄວາ ເຊິ່ງເປັນສ່ວນໜຶ່ງ ຂອງຄວາມພະຍາຍາມຂອງ ສສກ ເພື່ອເສີມຂະຫຍາຍການສ້າງລະບົບ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນທົ່ວປະເທດ ສຳລັບຄູສອນໃນຊັ້ນໂຮງຮຽນປະຖົມສຶກສາ. ຄຳແນະນຳໄດ້ໃຫ້ຂໍ້ມູນ ເພື່ອຂັບເຄື່ອນລະບົບ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ໃນນີ້ລວມມີ ພາລະບົດບາດ ແລະ ຄວາມຮັບ ຜິດຊອບ ຂອງແຕ່ລະພາກສ່ວນທີ່ເປັນຜູ້ມີສ່ວນຮ່ວມທີ່ສຳຄັນ.

ໃນຫລາຍປີຜ່ານມາ, ສສກ ແລະ ກົມສ້າງຄູ ໄດ້ມີຄວາມກ້າວໜ້າທີ່ໂດດເດັ່ນໃນການສ້າງ ແລະ ປະຕິບັດລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງໃນຂັ້ນໂຮງຮຽນ ເຊິ່ງກອງປະຊຸມຄັ້ງນີ້, ຈະໄດ້ຮັບຟັງຄຳຄິດເຫັນ ເພື່ອປັບປຸງຄຳແນະນຳໃຫ້ເໝາະສົມກັບຈຸດປະສົງ, ເພື່ອໃຫ້ການສະໜັບສະໜູນ ແກ່ຜູ້ທີ່ມີສ່ວນຮ່ວມ ໃນລະບົບການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງ ໃຫ້ຈັດຕັ້ງປະຕິບັດຢ່າງມີປະສິດທິ ພາບ ແລະ ມີຄວາມຮັບຜິດຊອບ ຕາມພາລະບົດບາດຂອງຕົນຢ່າງເປັນລະບົບ. ໃນໄລຍະຜ່ານມາ ກະ ຊວງສຶກສາທິການ ແລະ ກິລາ ໄດ້ມີນິຕິກຳທີ່ກ່ຽວຂ້ອງກັບການພັດທະນາ ວິຊາຊີບຄູແບບຕໍ່ເນື່ອງຫລາຍສະບັບ ເຊິ່ງກອງປະຊຸມຄັ້ງນີ້, ບັນດາຜູ້ເຂົ້າຮ່ວມ ຈະເຮັດວຽກຮ່ວມກັນເພື່ອທົບທວນ ຄຳແນະ ນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງທີ່ພັດທະນາຂຶ້ນ. ທັງນີ້, ກໍເພື່ອໃຫ້ມີຄວາມເປັນເອກະພາບ ໃນການປັບປຸງຄຳແນະນຳ ໃຫ້ສົມບູນຂຶ້ນ ເພື່ອສົ່ງເສີມຄຸນນະພາບການສອນ ແລະ ການຝຶກອົບຮົມຄູ.



ກົມສ້າງຄູ ຈະເຮັດວຽກຢ່າງໃກ້ຊິດຮ່ວມກັບແຜນງານບີຄວາ ເພື່ອທົດລອງລະບົບໃໝ່ການພັດ ທະນາວິຊາຊີບຄູແບບຕົວເນື່ອງຢູ່ໃນ 30 ເມືອງເປົ້າໝາຍ ໂດຍມີຈຸດປະສົງເພື່ອສະໜອງການຊ່ວຍ ເຫລືອຄູທີ່ເຂັ້ມແຂງ ແລະ ຍືນຍົງໃນຂັ້ນໂຮງຮຽນ, ພ້ອມທັງຈະມີການຕິດຕາມຜົນໄດ້ຮັບ, ສຶກສາຄົ້ນ ຄວ້າຜົນໄດ້ຮັບ, ຈາກນັ້ນກໍຈະຂະຫຍາຍລະບົບ ໄປຫາເຂດອື່ນໆໃນທົ່ວປະເທດ ແລະ ກຽມຄວາມພ້ອມເພື່ອການຈັດຕັ້ງປະຕິບັດ ວຽກດັ່ງກ່າວໃຫ້ປາກົດຜົນເປັນຈິງ.

ທ່ານ ນາງ ອາເນັດຊ້າ ເຮັກກາທີ້ ເລຂາເອກ ສະຖານທູດອົດສະຕຣາລີ ປະຈຳ ສປປ ລາວ ໄດ້ກ່າວວ່າ: ຄຸນນະພາບການສອນ ແມ່ນໝາກຫົວໃຈຂອງລະບົບ ການສຶກສາທີ່ເຂັ້ມແຂງ, ພວກເຮົາພູມໃຈທີ່ໄດ້ໃຫ້ການສະໜັບສະໜູນ ການສ້າງຄວາມເຂັ້ມແຂງໃຫ້ແກ່ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອເປີດໂອກາດໃຫ້ຄູໄດ້ຮຽນຮູ້ ຜ່ານຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ຄຳແນະ ນຳເຫລົ່ານີ້ ແມ່ນເປັນຄາດໝາຍສຳລັບການພັດທະນາຄູ. ຂະແໜງການສຶກສາແມ່ນກຳລັງຜະເຊີນກັບ ຄວາມທ້າທາຍທີ່ສຳຄັນຄື ການຂາດແຄນຄູສອນ ເຮັດໃຫ້ການພັດທະນາວິຊາຊີບຄູ ແບບຕໍ່ເນື່ອງມີຄວາມສຳຄັນກວ່າເກົ່າ. ດ້ວຍການສ້າງຄວາມເຂັ້ມແຂງ ໃຫ້ແກ່ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ເຊິ່ງຮັບປະກັນວ່າ ຄູໃນປັດຈຸບັນ ໄດ້ຮັບການຊ່ວຍເຫລືອທີ່ເຂົາເຈົ້າຕ້ອງການ ເພື່ອມີປະສິດທິພາບໃນການສອນໃນຫ້ອງຮຽນ.

ຄຳແນະນຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ສະບັບປັບປຸງ, ແມ່ນໝາກຜົນການຮ່ວມມືຂອງບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງ, ຈະເປັນເອກະສານສະບັບສົມບູນ ເພື່ອຂໍອະນຸມັດ ແລະ ນຳໃຊ້ໃນຂອບເຂດທົ່ວປະເທດພາຍໃນ ເດືອນທັນວາ 2025, ເປັນເອກະສານທີ່ຈະໃຫ້ຂໍ້ມູນແກ່ບັນດາພາກສ່ວນທີ່ມີຄວາມກ່ຽວຂ້ອງ ໃນລະບົບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ໄດ້ມີຂໍ້ມູນທີ່ສຳຄັນ ແລະ ມີຄຳແນະນຳ ທີ່ເຂົາເຈົ້າຕ້ອງການເພື່ອການຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດ.

KPL

## ຂ່າວ

ສສ ຫວຽດນາມ ເລັ່ງພັດທະນາເຂດຖະກິດທະເລ
06/06/2025 15:22

ຊາວຍີ່ປຸ່ນ ພາກັນໄປຊື້ເຂົ້າລາຄາຖືກຈາກລັດຖະບານ
06/06/2025 15:22

ຊາອຸດິດ ອາຣາມໂກ ປັບຫລຸດລາຄານ້ຳມັນດິບທີ່ສຳຄັນ ສຳລັບລູກຄ້າໃນອາຊີ
06/06/2025 15:22

ທູດລາວ ຍື່ນສານຕາຕັ້ງ ຕໍ່ຜູ້ສຳເລັດ ຣາຊະການ ແຫ່ງເຄືອຈັກກະພົບ ອົດສະຕຣາລີ
06/06/2025 08:50

ລັດຖະມົນຕີກະຊວງການຕ່າງປະເທດ ຕ້ອນຮັບທູດ ອິງການຣີ ເຂົ້າຢ້ຽມຂໍ່ານັບ
06/06/2025 08:43

## ໜັງສືພິມ



## MOST VIEWED

1 ເກີດເຫດດິນເຈື່ອນຢູອິນໂດເນເຊຍ ມີຜູ້ເສຍຊີວິດເກືອບ 20ຄົນ

2 ຮອງປະທານປະເທດຕ້ອນຮັບ ທູດອາຣັບ ເອຢິບ ປະຈຳລາວ ເຂົ້າຢ້ຽມອຳລາ

3 ສ້າງຄວາມເຂັ້ມແຂງ ໃຫ້ແກ່ຜະລິດຕະພັນທ້ອງຖິ່ນສູ່ຕະຫລາດສາກົນ

4 ສະຫລອງວັນເດັກສາກົນ ແລະ ວັນສົນທິສັນຍາວ່າດ້ວຍສິດທິເດັກ

5 ຜີລິບປິນ ຫລຸດການນຳເຂົ້າ ເຂົ້າຫລາຍກວ່າ20% ຫລັງຜະລິດໃນປະເທດເພີ່ມຂຶ້ນ

## ວິດີໂອ

ຂປລ. ຊີເອັມຈີ ເຜີຍແຜ່ການສະແດງທີ່ຍິ່ງໃຫຍ່ ໃນງານສະເຫຼີມສະຫຼອງບຸນປີໃໝ່ຈີນ 2025 (ກາລ່າ ກຸດຈີນ 2025) ທີ່ຈັດຂຶ້ນໃນວັນທີ 28 ມັງກອນ 2025 ຜ່ານມາ ໃຫ້ຫຼາຍປະເທດໃນໂລກໄດ້ຮັບຊົມ.

ປະເທດລາວ Pathedlao
389,069 followers
Follow Page Share
ປະເທດລາວ Pathedlao
24 minutes ago
ຊາອຸດິດ ອາຣາມໂກ ປັບຫລຸດລາຄານ້ຳມັນດິບທີ່ສຳຄັນ ສຳລັບລູກຄ້າໃນອາຊີ
ຂປລ.ຕາມຂ່າວຈາກລອຍເປີເຕີ, ບໍລິສັດ ຊາອຸດິດ ອາຣາມໂກ(Saudi Aramco)ປັບຫລຸດ ລາຄານ້ຳມັນດິບ ທີ່ສຳຄັນ ສຳລັບ (Arab Light )

| 2025-06-06 | BEQUAL Website |
|---|---|

Australian Aid

**BEQUAL** About us Activities Library Opportunities English

# Ministry of Education and Sports of Lao PDR and Australia collaborate to enhance continuing professional development opportunities for teachers

POSTED ON 6 JUNE 2025


Participants who joined the meeting to discuss CPD Guideline

**Key education stakeholders gather to discuss the new draft Primary Teacher Continuing Professional Development Guidelines**

The Ministry of Education and Sports (MoES), in collaboration with the Australian Government through the BEQUAL program, hosted a Consultation Workshop on new Primary Teacher Continuing Professional Development (CPD) Guidelines in Vientiane and across three Teacher Training Colleges (TTCs) on June 3-4. The two-day workshop brought together key education stakeholders to review and refine the draft guidelines, ensuring their effectiveness in strengthening professional development for teachers nationwide.

Opening the workshop, Dr. Daravone Kittiphanh, Vice Minister of Education and Sports, Lao PDR, emphasised the importance of CPD in enhancing education quality:
***"This CPD Guidelines consultation workshop plays a vital role in advancing our efforts to improve teaching quality. Teachers are at the heart of education, and strengthening teaching is a top priority for the Ministry of Education. I would like to extend my sincere gratitude to the Government and people of Australia for their long-standing support in strengthening the quality of teaching. Their contribution is helping us improve student learning outcomes across the country, particularly in disadvantaged areas, and is promoting inclusive education to ensure that everyone has equal access to learning opportunities."***

The CPD Guidelines were developed with Australia's support as part of MoES' broader efforts to establish a nationwide CPD system for in-service teachers. The guidelines provide information to guide the functioning of the CPD system, including roles and responsibilities for key stakeholders. Over the past years, MoES, Department of Teacher Education, has made significant progress establishing and operating a system for school-based primary teacher CPD. This workshop aimed to seek feedback to ensure that the guidelines are fit for purpose to support all CPD system stakeholders to effectively undertake their responsibilities in the system.


Participants who joined the meeting to discuss CPD Guideline


Teachers have access to a range of CPD tools, including development videos and support packs

Dr. Daravone Kittiphanh explained the objective of the workshop and encourage participation of all: ***"There are many decrees and regulations related to CPD. Over the next two days, we will work to revise the CPD guidelines which were developed with support from Australia through the BEQUAL program. Our objective is to produce a comprehensive document that supports teaching quality and teacher training. The Department of Teacher Education will take the lead in implementing these guidelines."***

The participants of the workshop included over 50 representatives from the relevant departments of MoES, 7 target Provincial Education and Sports Services, 8 Teacher Training Colleges, three target District Education and Sports Bureaus, relevant Development Partners and NGOs.

Dr. Daravone Kittiphanh explained ***"DTE is working closely with BEQUAL to pilot a new CPD system in 30 target districts, with the aim of providing stronger and sustainable support for teachers at school level. We will monitor the outcomes, learn from the results, and then expand the system to other areas across the country. That is why we have invited other Development Partners to join this workshop. I encourage everyone to listen actively, participate fully, and share your experiences and insights on CPD, so that the guidelines we develop are clear, practical, and ready for implementation as well as suitable for Lao education context."***


Quality teaching forms the foundation of a strong education system


CPD guidelines clearly outline the roles and responsibilities of all education stakeholders

During the workshop DTE presented results and achievements on the implementation of school-based CPD to date and provided an overview of the CPD Guidelines' purpose, structure and intended use. Participants engaged actively in offline group discussions to provide feedback on the guidelines and the approach for piloting them in 30 target districts. Participants were also informed of the process for further developing and finalising the guidelines, including focus group consultations with sub-national CPD system stakeholders. The second day of the workshop focused on collecting stakeholder feedback and agreeing on key revisions that will be made to the draft guidelines.

In an interview, Ms Vanessa Hegarty, First Secretary, Australian Embassy reaffirmed the Australia's commitment to supporting teacher development in Laos: ***"Quality teaching is at the heart of a strong education system. We are proud to support MoES in strengthening professional development opportunities for teachers through these CPD Guidelines. Those guidelines are a milestone for teacher development."*** **She also highlighted the urgency of strengthening CPD in the face of current challenges in the education sector: "*The education sector is facing a critical challenge with teacher shortages, making professional development more important than ever. By strengthening CPD, we ensure that existing teachers receive the support they need to be effective in the classroom. This is why Australia remains committed to investing in teacher professional development as a key strategy to improve education quality in Laos.*"**

The revised CPD Guidelines, incorporating stakeholder input, will be finalised for approval and nationwide use by December 2025, providing all CPD system stakeholders with the key information and guidance they need for success.

Dr Daravone concluded that ***"How can we progress in a world that is constantly changing? It means we must adapt as well. That's why educators can never stop improving. If we stop learning, we stop developing ourselves, we stop growing".***